ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************************

ຫ້ອງວ່າການລັດຖະບານ

ເລກທີ...566.../ຫລບ.ກລຊ

ນະຄອນຫລວງວຽງຈັນ, ວັນທີ 2 . 4- 2015

# ແຈ້ງການ

ຮຽນ: - ບັນດາທ່ານລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການທຽບເທົ່າ.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນທົ່ວປະເທດ.
- ບັນດາທ່ານຫົວໜ້າອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ.

ເລື່ອງ: ການຈັດຕັ້ງສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2558.

- ອີງຕາມມາດຕາ 55 ຂອງກົດໝາຍວ່າດ້ວຍແຮງງານ, ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 ກ່ຽວກັບວັນພັກທາງລັດຖະການ.
- ອີງຕາມຮີດຄອງປະເພນີ ແລະ ມູນເຊື້ອອັນດີງາມຂອງຊາດລາວມາແຕ່ດົນນານ ໃນການສະເຫຼີມສະຫຼອງວັນບຸນປີໃໝ່ກຸດສົງການ.
- ອີງຕາມການຕົກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 30 ມີນາ 2015.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານລັດຖະມົນຕີວ່າການ-ຫົວໜ້າອົງການທຽບເທົ່າ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ບັນດາຫົວໜ້າອົງການຈັດຕັ້ງມະຫາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນທົ່ວປະເທດ ຊາບ ແລະ ປະຕິບັດ ດັ່ງນີ້:

"1/- ການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2558 ເປັນປີທີ່ມີຄວາມໝາຍສຳຄັນ ຊຶ່ງເປັນປີທີ່ທົ່ວພັກ ທົ່ວປວງຊົນ ກຳລັງຂຸ້ນຂ້ຽວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ- ສັງຄົມ 5 ປີ ຄັ້ງທີ VII ໃນສົກປີສຸດທ້າຍ ແລະ ການກະກຽມສະເຫຼີມສະຫຼອງ 2 ວັນປະຫວັດສາດ ທີ່ສຳຄັນຂອງຊາດ.

2/- ໃຫ້ຖືເອົາການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2558 ທີ່ຈະໝູນວຽນມາເຖິງນີ້ ເປັນໂອກາດໜຶ່ງທີ່ສຳຄັນ ໃນການສືບຕໍ່ເສີມຂະຫຍາຍມູນເຊື້ອ ຮີດຄອງປະເພນີອັນດີງາມ ແລະ ຄວາມສາມັກຄີເປັນປຶກແຜ່ນຂອງຊາດ ທີ່ມີມາແຕ່ດົນນານແລ້ວ, ເປັນບຸນໃຫຍ່ປະຈຳຊາດ ທີ່ທົ່ວປວງຊົນລາວທັງຊາດ ຖືເອົາໂອກາດນີ້ ອວຍໄຊໃຫ້ພອນເຊິ່ງກັນ ແລະ ກັນ, ຈັດຕັ້ງສະເຫຼີມສະຫຼອງ ດ້ວຍບັນຍາກາດ

---

ເປີກບານມ່ວນຊື່ນ, ຖືກຕ້ອງຕາມຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ ຕິດພັນກັບການສົ່ງເສີມການທ່ອງທ່ຽວ ແລະ ບົນຈິດໃຈປະຢັດມັດທະຍັດ, ບໍ່ຈັດງານລ້ຽງຟຸມເຟືອຍ, ບໍ່ໃຫ້ນຳໃຊ້ງົບປະມານ ແລະ ພາຫະນະຂອງລັດ ໄປທ່ຽວຫລິ້ນບຸນ.

3/- ເນື່ອງຈາກປີໃໝ່ລາວປີນີ້ ແມ່ນວັນທີ 14, 15 ແລະ 16 ເມສາ 2015 (ກົງກັບວັນອັງຄານ, ພຸດ ແລະ ພະຫັດ), ສະນັ້ນ ຈຶ່ງຕົກລົງເຫັນດີ ໃຫ້ພັກຕໍ່ຮອດວັນທີ 17 ເມສາ 2015 ແລະ ກຳນົດເອົາວັນທີ 11 ເມສາ 2015 (ກົງກັບວັນເສົາ) ເປັນວັນເຮັດວຽກງານທາງລັດຖະການ ແທນວັນທີ 17 ເມສາ 2015.

4/- ການສະເຫຼີມສະຫຼອງປີໃໝ່ລາວໃນຄັ້ງນີ້ ເປັນໄລຍະເວລາຍາວ ຈຶ່ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເອົາໃຈໃສ່ໃນການຕິດຕາມ ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ບໍ່ໃຫ້ພໍ່ຄ້າຊາວຂາຍ, ຜູ້ປະກອບການ ສວຍໂອກາດຂຶ້ນລາຄາສິນຄ້າໂດຍບໍ່ມີເຫດຜົນ. ພ້ອມກັນນັ້ນ, ກໍ່ໃຫ້ສົມທົບກັບກະຊວງກ່ຽວຂ້ອງ ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດ ຕິດພັນກັບການຮັບປະກັນການສະໜອງສິນຄ້າໃຫ້ພຽງພໍກັບ ຄວາມຕ້ອງການຂອງສັງຄົມ.

5/- ໃຫ້ບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເອົາໃຈໃສ່ເປັນພິເສດ ຕໍ່ການຮັກສາຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ໃຫ້ມີການແບ່ງຄວາມຮັບຜິດຊອບ ໃນການເວນຍາມ ແລະ ປະຈຳການ ເພື່ອປ້ອງກັນສຳນັກງານອົງການ ແລະ ຢູ່ຕາມບ້ານ ຕະຫຼອດໄລຍະປີໃໝ່ລາວ ແລະ ໃຫ້ສາມາດປະສານງານ ໄດ້ຢ່າງເປັນປົກກະຕິທຸກເວລາ.

- ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການ ສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ທ້ອງຖິ່ນ ເພື່ອຮັບປະກັນຄວາມປອດໄພຕາມທ້ອງຖະໜົນ, ຈັດສັນ ແລະ ອຳນວຍຄວາມສະດວກໃນການ ສັນຈອນໄປ-ມາ ແລະ ໃຫ້ເພີ່ມການໂຄສະນາ ສ້າງຈິດສຳນຶກ "ເມົາແລ້ວບໍ່ຂັບລົດ" ແລະ ເຂັ້ມງວດກວດກາ ເພື່ອປ້ອງກັນການເກີດອຸປະຕິເຫດ; ການສະເຫຼີມສະຫຼອງຫົດນ້ຳ ຕ້ອງຮັບປະກັນ ບໍ່ສ້າງຄວາມເສຍຫາຍ ແລະ ບໍ່ເປັນອັນຕະລາຍຕໍ່ຊີວິດ ແລະ ຊັບສິນຂອງບຸກຄົນ ແລະ ສະຖານທີ່ສາທາລະນະ

ຕ່າງໆ.

6/- ມອບໃຫ້ການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພີ່ມທະວີການປະຊາສຳພັນ ໃຫ້ປະຊາຊົນໃນທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈ ຕໍ່ຈິດໃຈສະເຫຼີມສະຫຼອງບຸນປີໃໝ່ປະຈຳຊາດ ໃຫ້ສອດຄ່ອງກັບວັດທະນະທຳ ປະເພນີອັນດີງາມຂອງຊາດ ແລະ ສະພາບຕົວຈິງ, ຮັບປະກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ."

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມຈິດໃຈຊີ້ນຳຂ້າງເທິງນີ້ດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ຫ້ອງວ່າການລັດຖະບານ
ລັດຖະມົນຕີ, ຫົວໜ້າ

ສອນໄຊ ສີພັນດອນ

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ | 06 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການຕຸລາການ | 01 ສະບັບ |
| - ເກັບມ້ຽນ | 10 ສະບັບ |

---